Washington State Department of Social & Health Services
Transforming lives

AGING AND LONG-TERM SUPPORT ADMINISTRATION
RESIDENTIAL CARE SERVICES DIVISION

# ຄຳແຈ້ງການກ່ຽວກັບສິດທິຂອງທ່ານສຳລັບຜູ້ໃຫຍ່ອ່ອນແອ

**Vulnerable Adult Statement of Rights**

## ມີຈຸດປະສົງສຳລັບການໃຊ້ຢູ່ໃນ NH, ALF, AFH, ICF/IID (non RHC) ແລະ ESF

ອີງຕາມກົດໝາຍມາດຕາ 74.34 RCW, ທ່ານໄດ້ຮັບສິດທີ່ຈະເປັນອິສຣະຈາກການປະຖິ້ມ, ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ ແລະ ການປ່ອຍປະລະເລີຍ. ຖ້າມັນມີເຫດຜົນທີ່ຈະເຊື່ອວ່າທ່ານໄດ້ປະສົບພົບພໍ້ ກັບການປະຖິ້ມ, ການກົດຂີ່ຂົ່ມເຫັງ, ການສວຍໂອກາດດ້ານການເງິນ ຫລື ການປ່ອຍປະລະເລີຍ, ທ່ານມີສິດທີ່ຈະ:

1. ເຮັດການລາຍງານໄປຫາກົມສັງຄົມສົງເຄາະ ແລະ ສາທາຣະນະສຸກ (DSHS) ແລະ ເຈົ້າໜ້າທີ່ຕຳຣວດ ແລະ ແລກປ່ຽນຣາຍຣະອຽດຕ່າງໆນຳກັນທີ່ທ່ານເຊື່ອວ່າສາມາດກ່ຽວກັນກັບການສືບສວນ, ແລະ ຊີ້ຕົວທຸກໆຄົນທີ່ທ່ານເຊື່ອວ່າອາດຈະມີຣາຍຣະອຽດທີ່ກ່ຽວກັນກັບກໍຣະນີ.
2. ເປັນອິສຣະຈາກການແກ້ແຄ້ນສຳລັບການລາຍງານ ຫລື ການເຮັດໃຫ້ມີການລາຍງານກ່ຽວກັບການປະຖິ້ມ,ການກົດຂີ່ຂົ່ມເຫັງ. ການສວຍໂອກາດດ້ານການເງິນ, ຫລື ການປ່ອຍປະລະເລີຍ.
3. ຖືກປະຕິບັດນຳດ້ວຍກຽດ ແລະເວົ້ານຳດ້ວຍພາສາທີ່ນ່ານັບຖື.
4. ການອຳນວຍຄວາມສະດວກທີ່ເໝາະສົມສຳລັບຄວາມເສັຽອົງຄະຂອງທ່ານເມື່ອເວລາລາຍງານ, ແລະ ໃນຣະຫວ່າງການສືບສວນ ແລະ ການດຳເນີນການທາງການປົກຄອງ.
5. ຮ້ອງຂໍເອົາຄຳສັ່ງທີ່ຫວງຫ້າມຄົນໃດຄົນນຶ່ງຜູ້ທີ່ໄດ້ປະຖິ້ມ,ກົດຂີ່ຂົ່ມເຫັງ,ສວຍໂອກາດດ້ານການເງິນຫລືປ່ອຍປະລະເລີຍທ່ານຈາກການຍັງຢູ່ໃນເຮືອນຂອງທ່ານ,ການມີການຕິດຕໍ່ນຳທ່ານ,ຫລືການເຂົ້າເຖິງເງິນຫລືຊັບສິນຂອງທ່ານ. **ພວກເຮົາຈະສົ່ງທ່ານໄປຫາອົງການທີ່ສາມາດຊ່ວຍເຫລືອທ່ານໄດ້.**
6. ຮັບເອົາຈາກກົມ DSHS ຣາຍຣະອຽດ ແລະ ການສົ່ງຕໍ່ທີ່ເໝາະສົມໄປຫາຫ້ອງການອື່ນທີ່ສາມາດສະໜັບສະໜູນ, ສືບສວນ, ຫລື ດຳເນີນການ.
7. ຖືກແຈ້ງບອກກ່ຽວກັບສະພາບຂອງການສືບສວນ, ການດຳເນີນການ, ການກະທຳຂອງສານ, ແລະ ຜົນອອກມາໂດຍຫ້ອງການທີ່ກຳສຳນວນເອກສານຕ່າງໆຊຶ່ງໃນນັ້ນທ່ານເປັນຜູ້ເຄາະຮ້າຍ (ພາຍໃນກົດກຳນົດທີ່ຖືກກໍ່ຕັ້ງໂດຍກົດໝາຍ) .
8. ຮ້ອງຂໍເອົາການສົ່ງຕໍ່ໄປເອົາການສະໜັບສະໜູນ ຫລື ການຊ່ວຍເຫລືອທາງກົດໝາຍເພື່ອຈະຊ່ວຍເຫລືອນຳການວາງແຜນ ເຣື່ອງຄວາມປອດພັຍ, ການສືບສວນ, ແລະ ການຟັງເຣື່ອງ.**ພວກເຮົາຈະສົ່ງທ່ານໄປຫາບ່ອນຊ່ວຍເຫລືອທີ່ເໝາະສົມ.**ຈົ່ງເບິ່ງເລກໂທຣະສັບທີ່ຖືກບົ່ງຢູ່ຂ້າງລຸ່ມນີ້.
9. ຮ້ອງທຸກຫາກົມ DSHS ຢ່າງເປັນທາງການ ຫລື ບໍ່ເປັນທາງການ, ກ່ຽວກັບການສືບສວນ ຫລື ການດຳເນີນການ, ແລະ ໄດ້ຮັບຄຳຕອບໂດຍທັນທີໂລດ.

**ເພື່ອຈະລາຍງານການກົດຂີ່ຂົ່ມເຫັງ, ການປະຖິ້ມ, ການປ່ອຍປະລະເລີຍ, ການປ່ອຍປະລະເລີຍຕົນເອງ ຫລື ການສວຍໂອກາດທາງການເງິນ, ຫລື ເພື່ອຈະຮ້ອງຂໍເອົາຄຳສັ່ງປ້ອງກັນ, ໂທຫາ:**

**Residential Care Services Complaint Hotline**
**1-800-562-6078**

**ສຽງເວົ້າ / TTY ເຂົ້າຫາໄດ້ 1-800-737-7931**

ເພື່ອຈະຕິດຕໍ່ຫາຫ້ອງການຂອງ **State Long-Term Care Ombuds** ໂທຫາ:
**1-800-562-6028**
**TTY: 1-800-737-7931**

ເພື່ອຈະຕິດຕໍ່ຫາ **Disability Rights of Washington** ໂທຫາ:
**1-800-562-2702**

**Washington Relay (TTY)** ມີໄວ້ໃຫ້ໂດຍຜ່ານ **711**

ເພື່ອຈະຕິດຕໍ່ຫາສາຍໂທຮ້ອງທຸກຂອງ **Office of Developmental Disability Ombuds Complaint Lines:**
ສຽງເວົ້າ: **(833) 727-8900**
ນາຍແປພາສາກໍມີໄວ້ໃຫ້ຮັບໃຊ້
**TTY:** ກະຣຸນາໃຊ້ **711 Washington Relay Service**